# Law on Investment Promotion

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 12
## Dispute solution of investment
## ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການລົງທຶນ

### 1. ສະພາບລວມກ່ຽວກັບການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການລົງທຶນ ຢູ່ ສປປ ລາວ

ລັດຖະບານໄດ້ວາງມາດຕະການໃນການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການລົງທຶນ, ໃຫ້ບູລິມະສິດການໄກ່ເກ່ຍດ້ວຍ ວິທີປະນີປະນອມກັນເສຍກ່ອນ, ຖ້າຫາກບໍ່ສາມາດແກ້ໄຂຂໍ້ຂັດແຍ່ງດັ່ງກ່າວໄດ້ ຄູ່ກໍລະນີສາມາດຍື່ນຄໍາຮ້ອງຂໍການໄກ່ ເກ່ຍຢູ່ບ່ອນທີ່ໄດ້ຮັບອະນຸຍາດລົງທຶນ ເພື່ອໃຫ້ດໍາເນີນການໄກ່ເກ່ຍຕາມກໍານົດເວລາທີ່ໄດ້ລະບຸໄວ້ໃນກົດໝາຍ, ຖ້າຫາກຍັງແກ້ໄຂບໍ່ໄດ້ ໃຫ້ຄູ່ກໍລະນີຍື່ນຄໍາຮ້ອງຂໍຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຫຼື ຂະບວນການຍຸຕິທໍາຕາມການຕົກລົງຂອງຄູ່ກໍລະນີ.

ລັດຖະບານໄດ້ກໍານົດ “ຫຼັກການ, ລະບຽບການແລະມາດຕະການກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ການກວດກາວຽກງານແກ້ໄຂຂໍ້ຂັດແຍ່ງກ່ຽວກັບການລົງທຶນ ເພື່ອເຮັດໃຫ້ ວຽກງານດັ່ງກ່າວໄດ້ຮັບການແກ້ໄຂຢ່າງສັນຕິວິທີ, ເປັນທໍາ ແລະ ວ່ອງໄວໃນໃສ່ຊຸກຍູ້ການດໍາເນີນການຜະລິດ-ທຸລະກິດໃຫ້ຂະຫຍາຍຕົວ ແລະ ເຊື່ອມໂຍງເຂົ້າສາກົນ, ສ້າງສະພາບແວດລ້ອມເອື້ອອໍານວຍໃຫ້ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ, ປະກອບສ່ວນພັດທະນາເສດຖະກິດ-ສັງຄົມຂອງຊາດ”[1].

ໃນກໍລະນີຂໍ້ຂັດແຍ່ງກ່ຽວກັບການລົງທຶນທີ່ມີສັນຍາກັບລັດຖະບານ,ຄູ່ກໍລະນີຕ້ອງດໍາເນີນການແກ້ໄຂຂໍ້ຂັດແຍ່ງຕາມທີ່ກໍານົດໄວ້ໃນສັນຍາ ຊຶ່ງຫຼັກການໃນການດໍາເນີນການແກ້ໄຂຂໍ້ຂັດແຍ່ງໃນເບື້ອງຕົ້ນຕ້ອງໄດ້ເລືອກເອົາວິທີການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໂດຍສອດຄ່ອງກັບກົດໝາຍຂອງ ສປປ ລາວເສຍກ່ອນ, ຖ້າຫາກຄູ່ກໍລະນີຍັງບໍ່ສາມາດແກ້ໄຂຂໍ້ຂັດແຍ່ງດັ່ງກ່າວໄດ້ ກໍສາມາດເລືອກເອົາວິທີການອື່ນຕາມການຕົກລົງຂອງຄູ່ກໍລະນີ.

ຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນຂໍ້ພິພາດທາງດ້ານຜົນປະໂຫຍດ ລະຫວ່າງນິຕິບຸກຄົນດ້ວຍກັນ, ນິຕິບຸກຄົນກັບບຸກຄົນ, ບຸກຄົນກັບບຸກຄົນທັງພາຍໃນ ແລະ ຕ່າງປະເທດ ທີ່ເກີດຂຶ້ນຈາກການລະເມີດສັນຍາ, ການດໍາເນີນການຜະລິດ-ທຸລະກິດ.

[1] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ສະບັບເລກທີ 51/ສພຊ, ລົງວັນທີ 22ມິຖຸນາ 2018,ມາດຕາ 1

ນະໂຍບາຍຂອງລັດກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທີ່ເກີດຈາກການລົງທຶນ, ລັດສົ່ງເສີມໃຫ້ບຸກຄົນ, ການຈັດຕັ້ງທຸລະກິດລວມທັງພາກລັດ ແລະ ເອເອກະຊົນໃຫ້ດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໂດຍສັນຕິວິທີດ້ວຍການໄກ່ເກ່ຍ ຫຼື ດ້ວຍການຕັດສີນ ລັດສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ສູນ ແລະ ຫ້ອງ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດສາມາດເຄື່ອນໄຫວປະຕິບັດສິດ ແລະ ໜ້າທີ່ຂອງຕົນຕາມລະບຽບກົດໝາຍຢ່າງມີປະສິດທິຜົນ; ລັດສົ່ງເສີມໃຫ້ບຸກຄົນ, ການຈັດຕັ້ງເອກະຊົນເຂົ້າຮ່ວມພັດທະນາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານການລົງທຶນ. ລັດອະນຸຍາດໃຫ້ສ້າງຕັ້ງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ແລະ ສະເພາະກິດຊຶ່ງໄດ້ກຳນົດໄວ້ໃນລະບຽບການສະເພາະ.

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນການແກ້ໄຂຂໍ້ພິພາດທາງດ້ານຜົນປະໂຫຍດ ດ້ວຍການໄກ່ເກ່ຍ ຫຼື ດ້ວຍການຕັດສີນ ຊຶ່ງດຳເນີນຢູ່ນອກລະບົບສານປະຊາຊົນ[2].

ໃນກໍລະນີເກີດຂໍ້ຂັດແຍ່ງລະຫວ່າງຜູ້ຖືຮຸ້ນ ຫຼື ຂໍ້ຂັດແຍ່ງອື່ນໆ ໃນການດຳເນີນທຸລະກິດຕາມຮູບແບບວິສາຫະ ກິດປະສົມ ແລະ ການລົງທຶນຕ່າງປະເທດ 100% ນັ້ນ ຄູ່ກໍລະນີຕ້ອງດຳເນີນການໄກ່ເກ່ຍດ້ວຍວິທີການປະນີປະນອມ ກັນເສັຍກ່ອນ, ຖ້າຫາກຍັງບໍ່ສາມາດແກ້ໄຂຂໍ້ຂັດແຍ່ງດັ່ງກ່າວໄດ້ ຄູ່ກໍລະນີສາມາດຍື່ນຄຳຮ້ອງເພື່ອຂໍດຳເນີນການໄກ່ເກັ່ຍ ຢູ່ ຄລທ ບ່ອນທີ່ຕົນໄດ້ຮັບອະນຸຍາດດຳເນີນທຸລະກິດພາຍໃນກຳນົດ ສາມສິບ(30) ວັນລັດຖະການ, ຖ້າຫາກ ຍັງແກ້ໄຂບໍ່ໄດ້ ໃຫ້ຄູ່ກໍລະນີຍື່ນຄຳຮ້ອງຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຫຼື ຂະບວນການຍຸຕິທຳຕາມ ການຕົກລົງຂອງຄູ່ກໍລະນີ.[3]

ສິດໃນການເລືອກການແກ້ໄຂຂໍ້ຂັດແຍ່ງບຸກຄົນ, ນິຕິບຸກຄົນຫຼືການຈັດຕັ້ງທັງພາຍໃນຫຼືຕ່າງປະເທດ ມີສິດເລືອກເອົາການແກ້ໄຂຂໍ້ຂັດແຍ່ງທາງດ້ານການລົງທຶນພາຍໃຕ້ກົດໝາຍຂອງ ສປປ ລາວ; ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງຕ່າງປະເທດທີ່ດຳເນີນທຸລະກິດການຄ້າສາກົນ ຫຼື ການລົງທຶນຕ່າງປະເທດຢູ່ ສປປລາວ ມີສິດ ເລືອກເອົາອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງຕ່າງປະເທດ ຫຼື ສາກົນລວມທັງກຳມະການ ຫຼື ຄະນະກຳມະການຕັດສີນ, ກົດໝາຍ, ລະບຽບການດຳເນີນ, ສະຖານທີ່ ແລະ ພາສາຕາມການຕົກລົງກັນ.

**2. ຮູບການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການລົງທຶນ**

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການລົງທຶນສາມາດດຳເນີນດ້ວຍຮູບການໃດໜຶ່ງລຸ່ມນີ້:

1) ການໄກ່ເກ່ຍ ຫຼື ການປະນີປະນອມ;

2) ການແກ້ໄຂທາງດ້ານບໍລິຫານ;

3) ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການລົງທຶນຜ່ານອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານ ເສດຖະກິດ ຢູ່ ສປປ ລາວ ຫຼື ຕ່າງປະເທດ ທີ່ ສປປ ລາວເປັນພາຄີ;

4) ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການລົງທຶນຜ່ານການຮ້ອງຟ້ອງຕໍ່ສານ ສປປ ລາວ ຫຼື ຕ່າງປະເທດ ທີ່ ສປປ ລາວ ເປັນພາຄີ.

---

[2] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມາດຕາ 2 ປີ 2010

[3] ດຳລັດ ສະບັບເລກທີ 300/ນຍ ລົງວັນທີ 12/10/2005 ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນພາຍໃນ ມາດຕາ 53 ແລະ ດຳລັດສະບັບເລກທີ301/ນຍ ລົງວັນທີ 12/10/2005ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນຕ່າງປະເທດ,ມາດຕາ65.

- **ການໄກ່ເກ່ຍ ຫຼື ການປະນີປະນອມ:** ໃນກໍລະນີທີ່ມີຂໍ້ຂັດແຍ່ງກ່ຽວກັບການລົງທຶນ ຄູ່ກໍລະນີ ຕ້ອງດໍາເນີນການແກ້ໄຂຂໍ້ຂັດແຍ່ງນັ້ນ ດ້ວຍການ ສັນຕິວິທີ, ການປະນີປະນອມນໍາກັນ ຫຼື ໂດຍຜ່ານຄົນກາງ ເພື່ອໃຫ້ຕ່າງຝ່າຍ ຕ່າງໄດ້ຮັບຜົນປະໂຫຍດ ທີ່ສົມເຫດສົມ ຜົນ ແລະ ເປັນທໍາ.

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການລົງທຶນດ້ວຍການປະນີປະນອມກັນແມ່ນການແກ້ໄຂຂໍ້ຂັດແຍ່ງໂດຍຄູ່ກໍລະນີເອງ ດ້ວຍການປະນີປະນອມ,ເຈລະຈາ ແລະ ປຶກສາຫາລືຊຶ່ງມີຜູ້ໄກ່ເກ່ຍໜຶ່ງ ຫຼື ຫຼາຍຄົນເປັນຄົນກາງ.

ການດໍາເນີນການໄກ່ເກ່ຍ ດ້ວຍການປະນີປະນອມຕ້ອງດໍາເນີນພາຍໃນສິບຫ້າວັນນັບແຕ່ວັນແຕ່ງຕັ້ງຜູ້ໄກ່ເກ່ຍເປັນຕົ້ນໄປໂດຍຊ່ອງໜ້າຄູ່ກໍລະນີ ຫຼື ຜູ້ຕາງໜ້າ ຄູ່ກໍລະນີມີສິດສະເໜີບັນຫາ, ຂໍ້ມູນ ຫຼື ຫຼັກຖານຕ່າງໆກ່ຽວກັບຂໍ້ຂັດແຍ່ງ ແລະ ວິທີທາງອອກຕໍ່ຜູ້ໄກ່ເກ່ຍໃນໄລຍະເວລາທໍາການໄກ່ເກ່ຍ.

ການເລືອກ ແລະ ການແຕ່ງຕັ້ງຜູ້ໄກ່ເກ່ຍດ້ວຍການປະນີປະນອມ ໃນການດໍາເນີນການໄກ່ເກ່ຍຄູ່ກໍລະນີມີສິດເລືອກເອົາຜູ້ໄກ່ ເກ່ຍໜຶ່ງຫຼືຫຼາຍຄົນ, ແຕ່ຕ້ອງເປັນຈໍານວນຄີກສະເໜີຈາກບັນຊີລາຍ ຊື່ຜູ້ໄກ່ເກ່ຍແລະກໍາມະການຕັດສິນ ໃນກໍລະນີເລືອກຜູ້ໄກ່ເກ່ຍໜຶ່ງຄົນໃຫ້ຄູ່ກໍລະນີຕົກລົງເລືອກ ເອົາຜູ້ໄກ່ເກ່ຍພາຍໃນກໍານົດສິບຫ້າວັນນັບແຕ່ວັນຕົກລົງນັ້ນເປັນຕົ້ນໄປ ຖ້າຫາກເລືອກບໍ່ໄດ້ສູນຫຼືຫ້ອງການແກ້ໄຂຂໍ້ຂັດແຍ່ງທາງ ດ້ານເສດຖະກິດຕ້ອງເລືອກໃຫ້ພາຍໃນກໍານົດສິບວັນ ໃນກໍລະນີເລືອກຜູ້ໄກ່ເກ່ຍສາມຄົນໃຫ້ຄູ່ກໍລະນີແຕ່ລະຝ່າຍ ເລືອກເອົາໜຶ່ງຄົນພາຍໃນກໍານົດສິບຫ້າວັນນັບແຕ່ວັນຕົກລົງນັ້ນ ເປັນຕົ້ນໄປ.

ຖ້າຄູ່ກໍລະນີຝ່າຍໃດຝ່າຍໜຶ່ງຫາກເລືອກບໍ່ໄດ້ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຕ້ອງເລືອກໃຫ້ ພາຍໃນກໍານົດສິບວັນ.ຫຼັງຈາກນັ້ນໃຫ້ຜູ້ໄກ່ເກ່ຍສອງຄົນທີ່ຖືກເລືອກ ນັ້ນເລືອກເອົາຜູ້ໄກ່ເກ່ຍຜູ້ທີສາມມາເປັນປະທານພາຍໃນກໍານົດສິບຫ້າວັນ,ຖ້າຫາກເລືອກບໍ່ໄດ້ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງ ທາງດ້ານເສດຖະກິດຕ້ອງເລືອກໃຫ້ພາຍໃນກໍານົດສິບວັນ ໃນກໍລະນີທີ່ຄູ່ກໍລະນີຕົກລົງເລືອກເອົາຜູ້ໄກ່ເກ່ຍຫຼາຍກວ່າ ສາມຄົນກໍ່ໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນວັກສາມເທິງນີ້ ສູນຫຼືຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຕ້ອງ ແຕ່ງຕັ້ງຜູ້ໄກ່ເກ່ຍພາຍໃນກໍານົດເຈັດວັນນັບແຕ່ວັນໄດ້ຮັບລາຍຊື່ ຜູ້ໄກ່ເກ່ຍຕາມການສະເໜີຂອງຄູ່ກໍລະນີ.

- **ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການລົງທຶນທາງດ້ານການບໍລິຫານ**: ໃນກໍລະນີ ເກີດຂໍ້ຂັດແຍ່ງກັບການລົງທຶນ ຄູ່ກໍລະນີຝ່າຍໃດຝ່າຍໜຶ່ງສາມາດສະເໜີ ຂໍ້ຂັດແຍ່ງຜ່ານຫ້ອງການບໍລິການ ການລົງທຶນປະຕູດຽວ ເພື່ອສະເໜີຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາແກ້ໄຂຕາມກົດ ໝາຍ.

- **ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການລົງທຶນຜ່ານອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານ ເສດຖະກິດ ຢູ່ ສປປ ລາວ ຫຼື ຕ່າງປະເທດ ທີ່ ສປປ ລາວເປັນພາຄີ:** ໃນກໍລະນີເກີດຂໍ້ຂັດແຍ່ງການລົງທຶນ ຄູ່ກໍລະນີສາມາດຮ້ອງຂໍຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງ ສປປລາວ ຫຼື ຕ່າງປະເທດ ທີ່ສອງຝ່າຍໄດ້ສັນຍານໍາກັນ.

ສປປ ລາວ ຮັບຮູ້ ແລະ ປະຕິບັດຄໍາຕັດສິນຂອງຄະນະກໍາມະການຕັດສິນຕ່າງປະເທດ ຫຼື ສາກົນ ໂດຍໄດ້ຮັບການຢັ້ງຢືນຈາກສານປະຊາຊົນຂອງ ສປປ ລາວ.

ຂໍ້ຂັດແຍ່ງທາງດ້ານການລົງທຶນທີ່ນໍາມາພິຈາລະນາໂດຍຜ່ານອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ຢູ່ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ) ມີດັ່ງນີ້: 1. ເປັນຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ການຄ້າ; 2. ຄູ່ກໍລະນີໄດ້ຕົກລົງກັນໄວ້ໃນສັນຍາ; 3. ຄູ່ກໍລະນີໄດ້ສະໝັກໃຈໃຫ້ແກ້ໄຂຂໍ້ຂັດແຍ່ງ; 4. ບໍ່ແມ່ນຂໍ້ຂັດແຍ່ງທີ່ສານປະຊາຊົນ

ພວມດຳເນີນການແກ້ໄຂຢູ່ ຫຼື ມີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ; 5. ບໍ່ແມ່ນຂໍ້ຂັດແຍ່ງທີ່ລະເມີດລະບຽບກົດໝາຍກ່ຽວກັບ ຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບຂອງສັງຄົມ ແລະ ສິ່ງແວດລ້ອມ....ໝວດທີ 2 ຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ການພິຈາລະນາຄຳຮ້ອງ ຫຼັງຈາກໄດ້ຮັບຄຳຮ້ອງແລ້ວພາຍໃນກຳນົດເຈັດວັນນັບແຕ່ ວັນໄດ້ຮັບຄຳຮ້ອງນັ້ນເປັນຕົ້ນໄປສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງ ທາງດ້ານເສດຖະກິດຕ້ອງກວດກາເບິ່ງສຳນວນຄຳຮ້ອງ ແລະ ອອກ ໝາຍເຊີນຄູ່ກໍລະນີເພື່ອເຂົ້າມາປຶກສາຫາລືແລະຕົກລົງກ່ຽວກັບຮູບການແກ້ໄຂ ຖ້າວ່າຄູ່ກໍລະນີຫາກບໍ່ມາຕາມໝາຍເຊີນໂດຍບໍ່ມີເຫດຜົນພຽງພໍຄຳຮ້ອງດັ່ງກ່າວກໍ່ຕົກໄປແລະສົ່ງສຳນວນຄຳຮ້ອງຄືນໃຫ້ແກ່ຜູ້ຮ້ອງຂໍ ໃນກໍລະນີທີ່ຄຳຮ້ອງຫາກບໍ່ຖືກຕ້ອງຕາມກົດໝາຍ, ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຊາບພ້ອມດ້ວຍເຫດຜົນພາຍໃນກຳນົດເຈັດວັນລັດຖະການນັບແຕ່ວັນໄດ້ຮັບຄຳຮ້ອງນັ້ນເປັນຕົ້ນໄປ.

ສານປະຊາຊົນຂອງ ສປປ ລາວຈະພິຈລະນາຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນໄດ້ ກໍຕໍ່ເມື່ອມີເງື່ອນໄຂຄົບຖ້ວນດັ່ງນີ້:

1) ຄູ່ກໍລະນີຕ້ອງຖືສັນຊາດຂອງປະເທດທີ່ເປັນພາຄີ ຂອງສົນທິສັນຍານິວຢອກ ປີ 1958 ວ່າດ້ວຍການຮັບຮູ້ ແລະ ບັງຄັບປະຕິບັດຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ;

2) ບໍ່ຂັດກັບລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການກ່ຽວກັບຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບຂອງສັງຄົມ ແລະ ສິ່ງແວດລ້ອມ;

3) ຄູ່ກໍລະນີຝ່າຍທີ່ມີພັນທະໃຊ້ແທນໜີ້ສິນມີຊັບສິນ,ກິດຈະການ,ຮຸ້ນ, ເງິນຝາກ ຫຼືຊັບສິນອື່ນຢູ່ ສປປ ລາວ.

ພາຍຫຼັງຄຳຕັດສິນ ຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ໄດ້ຖືກຮັບຮູ້ ແລະ ຍັງຢືນ ຈາກສານປະຊາ ຊົນຂອງ ສປປ ລາວ ແລ້ວກໍໃຫ້ຈັດຕັ້ງຄຳປະຕິບັດຄຳຕັດສິນດັ່ງກ່າວ ຕາມກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດ ສິນຂອງສານຂອງ ສປປ ລາວ.

ສຳລັບການແກ້ໄຂຂໍ້ຂັດແຍ່ງການລົງທຶນທີ່ໄດ້ມີສັນຍາກັບລັດຖະບານ ໃຫ້ປະຕິບັດຕາມສອງຝ່າຍທີ່ໄດ້ຕົກລົງກັນໄວ້ໃນສັນຍາ.

- **ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການລົງທຶນຜ່ານການຮ້ອງຟ້ອງຕໍ່ສານ ສປປ ລາວ ຫຼື ຕ່າງປະເທດ ທີ່ ສປປ ລາວເປັນພາຄີ:** ໃນກໍລະນີເກີດມີຂໍ້ຂັດແຍ່ງກ່ຽວກັບການລົງທຶນຝ່າຍໃດຝ່າຍໜຶ່ງສາມາດຮ້ອງຟ້ອງຕໍ່ສານປະຊາຊົນຕາມກົດໝາຍຂອງ ສປປ ລາວ ຫຼື ຕ່າງປະເທດ ທີ່ ສປປ ລາວເປັນພາຄີ ເມື່ອມີຄຳຕັດສິນຂອງສານທີ່ໃຊ້ຢ່າງເດັດຂາດແລ້ວໃຫ້ມີຜົນສັກສິດບັງຄັບປະຕິບັດຕໍ່ຄູ່ກໍລະນີ.

### 3. ຫຼັກການພື້ນຖານຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານການລົງທຶນໂດຍອີງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ຫຼັກການພື້ນຖານຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານການລົງທຶນ: ການແກ້ໄຂຂໍ້ຂັດແຍ່ງທາງດ້ານການລົງທຶນຕ້ອງປະຕິບັດຕາມຫຼັກການພື້ນຖານດັ່ງນີ້: 1. ການຮັບປະກັນຄວາມຍຸຕິທຳ ແລະ ຄວາມສອດຄ່ອງກັບກົດໝາຍ; 2. ຄວາມສະ

ໝັກໃຈຂອງຄູ່ກໍລະນີ; 3. ຄວາມສະເໝີພາບຂອງຄູ່ກໍລະນີ; 4. ຄວາມເປັນເອກະລາດ ແລະ ທ່ຽງທຳຂອງຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນ; 5. ພາສາທີ່ນຳໃຊ້; 6. ການຮັບປະກັນຄວາມລັບ;

- **ການຮັບປະກັນຄວາມຍຸຕິທຳ ແລະ ຄວາມສອດຄ່ອງກັບກົດໝາຍ:**

ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານການລົງທຶນ ຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ, ຜູ້ຕັດສິນ ແລະ ຄະນະກຳມະການຕັດສິນ ຕ້ອງຮັບປະກັນຄວາມຍຸຕິທຳ, ວ່ອງໄວ ແລະ ສອດຄ່ອງກັບກົດໝາຍ.

ໝາຍຄວາມວ່າ: ຫຼັກການຄວາມຍຸຕິທຳ ແລະ ສອດຄ່ອງກັບກົດໝາຍ ຕ້ອງຮັບປະກັນສອງດ້ານຄື: ດ້ານໜຶ່ງແມ່ນຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນຕ້ອງມີຄວາມສະເໝີພາບ ແລະ ສິດເທົ່າທຽມກັນ ແກ່ຄູ່ກໍລະນີ ແລະ ຖືເອົາຄວາມຈິງຂອງຂໍ້ຂັດແຍ່ງເປັນພື້ນຖານການພິຈາລະນາແກ້ໄຂ, ຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນຕ້ອງທ່ຽງທຳ, ໂປ່ງໃສ, ບໍ່ລຳອຽງ, ບໍ່ກົດໜ່ວງ, ຖ່ວງດຶງ ຫຼື ສ້າງຄວາມຫຍຸ້ງຍາກໃຫ້ແກ່ການແກ້ໄຂຂໍ້ຂັດແຍ່ງ, ບໍ່ທວງເອົາເງິນ ຫຼື ຜົນປະໂຫຍດໃດໜຶ່ງຈາກຄູ່ກໍລະນີ ແລະ ບໍ່ບັງຄັບນາບຂູ່ຄູ່ກໍລະນີ ແລະ ດ້ານທີສອງແມ່ນຄຳຕົກລົງຂອງຜູ້ໄກ່ເກ່ຍ ຫຼື ຄຳຕັດສິນຂອງຄະນະກຳມະການຕັດສິນຕ້ອງຖືກຕ້ອງຕາມກົດໝາຍ, ສອດຄ່ອງກັບຕົວຈິງ ແລະ ສາມາດປະຕິບັດໄດ້.

- **ຄວາມສະໝັກໃຈຂອງຄູ່ກໍລະນີ:**

ຄູ່ກໍລະນີມີສິດນຳເອົາຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ມາດຕາ 16 ສະບັບປີ 2018 ສະເໜີຕໍ່ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອແກ້ໄຂໂດຍບໍ່ມີການບັງຄັບ, ນາບຂູ່ຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ, ໝາຍຄວາມວ່າ ແມ່ນຄູ່ກໍລະນີເອງ ທີ່ຕ້ອງການໃຫ້ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພິຈາ ລະນາແກ້ໄຂຂໍ້ຂັດແຍ່ງຂອງຕົນ.

- **ຄວາມສະເໝີພາບຂອງຄູ່ກໍລະນີ:**

ໃນການແກ້ໄຂຂໍ້ຂັດແຍ່ງທີ່ເກີດຈາກການເຄື່ອນໄຫວລົງທຶນ, ຄູ່ກໍລະນີມີຄວາມສະເໝີພາບຕໍ່ໜ້າກົດໝາຍໂດຍບໍ່ຈຳແນກເພດ, ເຊື້ອຊາດ, ສັນຊາດ, ເຜົ່າ, ສະຖານະທາງດ້ານເສດຖະກິດ ແລະ ສັງຄົມ, ພາສາ, ລະດັບການສຶກສາ, ອາຍຸ, ຄວາມເຊື່ອຖື, ພູມລຳເນົາ ແລະ ອື່ນໆ, ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ທີ່ດຳເນີນທຸລະກິດ ຫຼື ລົງທຶນຢູ່ ສປປ ລາວ ກໍມີຄວາມສະເໝີພາບຄືກັບພົນລະເມືອງລາວ ຖ້າວ່າກົດໝາຍຫາກບໍ່ໄດ້ກຳນົດໄວ້ເປັນຢ່າງອື່ນ.

ຄວາມສະເໝີພາບໃນການແກ້ໄຂຂໍ້ຂັດແຍ່ງ ຕໍ່ໜ້າກົດໝາຍຂອງຄູ່ກໍລະນີ ສະແດງອອກດັ່ງນີ້:

\+ ໃນການກຳນົດ ຫຼື ເລືອກສະຖານທີ່ແກ້ໄຂຂໍ້ຂັດແຍ່ງ ຊຶ່ງບາງຄັ້ງໄດ້ກຳນົດໄວ້ໃນສັນຍາ ຫຼື ຄູ່ກໍລະນີ ອາດເຫັນດີນຳເອົາຂໍ້ຂັດແຍ່ງດັ່ງກ່າວໄປແກ້ໄຂ ຢູ່ພາຍໃນ ຫຼື ຕ່າງປະເທດ;

\+ ໃນການເລືອກຮູບການແກ້ໄຂຂໍ້ຂັດແຍ່ງ ຢູ່ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຫຼ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

\+ ໃນການເລືອກ ຫຼື ຄ້ານຕົວ ຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນ;

\+ ການສະເໜີຂໍ້ມູນຫຼັກຖານ;

\+ ໃນການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງ.

- **ການຮັບປະກັນຄວາມລັບ:**

ໃນການແກ້ໄຂຂໍ້ຂັດແຍ່ງທີ່ເກີດຈາກການລົງທຶນ, ຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ, ຜູ້ຕັດສິນ, ຄະນະກຳມະການຕັດສິນ, ຄູ່ກໍລະນີ ແລະ ຜູ້ເຂົ້າຮ່ວມອື່ນ ບໍ່ມີສິດເປີດເຜີຍຄວາມລັບກ່ຽວກັບຂໍ້ມູນ ແລະ ເອກະສານຕ່າງໆ ທີ່ໄດ້ນຳສະເໜີໃນເວລາໄກ່ເກ່ຍ ຫຼື ຕັດສິນ ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກຄູ່ກໍລະນີເທົ່ານັ້ນ.

ຄູ່ກໍລະນີ, ຜູ້ເຂົ້າຮ່ວມອື່ນ, ຜູ້ໄກ່ເກ່ຍ ແລະ ຄະນະກຳມະການຕັດສິນບໍ່ມີສິດເປີດເຜີຍເນື້ອໃນຂອງຂໍ້ຂັດແຍ່ງທີ່ຕົນໄດ້ຮູ້ ໂດຍບໍ່ໄດ້ຮັບອະນຸຍາດຈາກຄູ່ກໍລະນີ, ບໍ່ມີສິດນຳໃຊ້ຂໍ້ມູນທີ່ຕົນໄດ້ຮູ້ເພື່ອຫາຜົນປະໂຫຍດສ່ວນຕົວ ຫຼື ເພື່ອລະເມີດສິດ ແລະ ຜົນປະໂຫຍດຂອງບຸກຄົນອື່ນ. ໃນກໍລະນີມີການລະເມີດທີ່ສ້າງຄວາມເສຍຫາຍໃຫ້ແກ່ລັດ, ສັງຄົມ ຫຼື ບຸກຄົນອື່ນ ຜູ້ລະເມີດຈະຖືກປະຕິບັດມາດຕະການສຶກສາອົບຮົມ, ລົງວິໄນ, ປັບໃໝ ຫຼື ດຳເນີນຄະດີຕາມກົດໝາຍ ພ້ອມທັງໃຫ້ໃຊ້ແທນຄ່າເສຍຫາຍທີ່ເກີດຂຶ້ນ.

- **ຄວາມເປັນເອກະລາດ, ທ່ຽງທຳ ແລະ ໂປ່ງໃສ ຂອງຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ, ຜູ້ຕັດສິນ ແລະ ຄະນະກຳມະການຕັດສິນ:**

ໃນການແກ້ໄຂຂໍ້ຂັດແຍ່ງທີ່ເກີດຈາກການລົງທຶນ, ຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ, ຜູ້ຕັດສິນ ແລະ ຄະນະກຳມະການຕັດສິນຕ້ອງປະຕິບັດໜ້າທີ່ຂອງຕົນຢ່າງເປັນເອກະລາດ, ດ້ວຍຄວາມທ່ຽງທຳ ແລະ ໂປ່ງໃສ ພາຍໃຕ້ກົດໝາຍ, ລະບຽບການ, ປາສະຈາກການແຊກແຊງຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ.

ຄວາມເປັນເອກະລາດໝາຍເຖິງການປະຕິບັດໜ້າທີ່ຂອງຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນ ດ້ວຍຄວາມອິດສະຫຼະ ຕາມກົດໝາຍ ໂດຍປັດສະຈາກການແຊກແຊງຈາກພາກສ່ວນອື່ນ.

ຄວາມທ່ຽງທຳ ໝາຍເຖິງຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນ ຕ້ອງມີຈັນຍາບັນ-ຈັນຍາທຳຕໍ່ຫຼັກວິຊາຊີບ, ບໍ່ມີອະຄະຕິ, ບໍ່ເຂົ້າຂ້າງອອກຂາ ບົນພື້ນຖານຄວາມຈິງຂອງຂໍ້ຂັດແຍ່ງທີ່ເກີເຂີ້ນ, ອີງໃສ່ຂໍ້ມູນຫຼັກຖານທີ່ໜັກແໜ້ນຕາມກົດໝາຍ.

- **ພາສາທີ່ນຳໃຊ້:**

ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ນຳໃຊ້ພາສາລາວ ເວັ້ນເສຍແຕ່ສັນຍາ ຫຼື ຄູ່ກໍລະນີ ຫາກໄດ້ຕົກລົງນຳໃຊ້ພາສາອື່ນ.

ພາສາທີ່ນຳໃຊ້ເຂົ້າໃນການແກ້ໄຂຂໍ້ຂັດແຍ່ງຢູ່ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງແມ່ນພາສາລາວ, ເວັ້ນເສຍແຕ່ສັນຍາ ຫຼື ຄູ່ກໍລະນີຫາກຕົກລົງໄວ້ຢ່າງອື່ນ, ສ່ວນຄູ່ກໍລະນີ ຫຼື ຜູ້ເຂົ້າຮ່ວມໃນການແກ້ໄຂຂໍ້ຂັດແຍ່ງທີ່ບໍ່ຮູ້ພາສາລາວສາມາດນຳໃຊ້ພາສາຕົນເອງ ຫຼື ພາສາອື່ນໂດຍຜ່ານຜູ້ແປພາສາ, ໝາຍຄວາມວ່າ ທຸກຂໍ້ຂັດແຍ່ງທີ່ນຳມາແກ້ໄຂຢູ່ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຫຼ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຕ້ອງນຳໃຊ້ພາສາລາວ, ຖ້າຄູ່ກໍລະນີຝ່າຍໃດໜຶ່ງ ຫຼື ທັງສອງຝ່າຍຫາກບໍ່ຮູ້ພາສາລາວ ກໍສາມາດນຳໃຊ້ພາສາຂອງຕົນ ຫຼື ພາສາອື່ນກໍໄດ້ໂດຍຜ່ານຜູ້ແປພາສາ.

**References:**

1. ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
2. ຕຳລາຮຽນວິຊາກົດໝາຍສົ່ງເສີມການລົງທຶນ, ສະຖາບັນຍຸຕິທຳແຫ່ງຊາດ, ປີ 2021;
3. ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ສະບັບເລກທີ 51/ສພຊ, ລົງວັນທີ 22ມິຖຸນາ 2018;
4. ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດປີ 2010;

5. ດຳລັດ ສະບັບເລກທີ 300/ນຍ ລົງວັນທີ 12/10/2005 ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນພາຍໃນ.
6. ດຳລັດສະບັບເລກທີ301/ນຍ ລົງວັນທີ 12/10/2005ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນຕ່າງປະເທດ.